ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821, ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

061 - - - - -

ເລກທີ_____/ບຊລ

ນະຄອນຫຼວງວຽງຈັນ, ວັນທີ 31 MAR 2020

ແຈ້ງການ

ເຖິງ : ບັນດາທ່ານກຸ່ມລູກຄ້າຍ່ອຍ ແລະລູກຄ້າໂຄງການຕ່າງໆທົ່ວໄປຂອງ ບໍລິສັດ ຊີມັງລາວ ມະຫາຊົນ.

ເລື່ອງ : ການປະຕິບັດຕາມຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນການລະບາດ, ຄວບຄຸມ ແລະກຽມພ້ອມຮອບດ້ານ ເພື່ອຕ້ານພະຍາດລະບາດຂອງໂຄວິດ-19 (Covid-19).

- ອີງຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ ລົງວັນທີ 29/3/2020
- ອີງຕາມໃບແຈ້ງການຂອງຜູ້ອຳນວຍການ ບໍລິສັດ ຊີມັງລາວ ມະຫາຊົນ ສະບັບເລກທີ 026/ບຊລ ລົງວັນທີ 31/3/2020.

ເພື່ອປະຕິບັດມະຕິຄຳສັ່ງຂອງລັດຖະບານຢ່າງເຄັ່ງຄັດ, ເພື່ອປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 (Covid-19) ແລະ ຮັບປະກັນຄວາມປອດໄພຂອງພະນັກງານ-ກຳມະກອນ ທົ່ວບໍລິສັດ ຊີມັງລາວ ມະຫາຊົນ ພ້ອມທັງສະແດງຄວາມຮັບຜິດຊອບຕໍ່ສັງຄົມໂດຍລວມ. ດັ່ງນັ້ນ, ທາງຜູ້ບໍລິຫານບໍລິສັດ ຊີມັງລາວ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຮັບຊາບວ່າ:

ບໍລິສັດ ຊີມັງລາວມະຫາຊົນ (ໂຮງງານຊີມັງວັງວຽງ ຫລັງ 2) ຈະໄດ້ຢຸດຕິການຜະລິດ, ຈຳໜ່າຍຊີມັງ ແລະບໍລິການລູກຄ້າຊື່ວຄາວນັບແຕ່ວັນທີ 1-19/4/2020 ຫຼັງຈາກນັ້ນ, ຫາກບໍ່ມີສະພາບການປ່ຽນແປງຈະກັບຄືນສູ່ການຜະລິດ ແລະຈຳໜ່າຍຊີມັງເປັນປົກກະຕິ.

ສະນັ້ນ, ທາງບໍລິສັດ ຊີມັງລາວ ມະຫາຊົນ ຈຶ່ງຂໍແຈ້ງມາຍັງ ບັນດາລູກຄ້າ ແລະທຸກພາກສ່ວນທີ່ກ່ຽວຂ້ອງເພື່ອຮັບຊາບຢ່າງທົ່ວເຖິງ.

ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ.

ຜູ້ອຳນວຍການ ບໍລິສັດ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ